**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

<u>ສຳນັກງານນາຍົກລັດຖະມົນຕີ</u>

ເລກທີ 473 /ນຍ.

ນະຄອນຫຼວງວຽງຈັນ, ວັນທີ 18.11.2010

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະກຳມະການແຫ່ງຊາດ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່.

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06 ພຶດສະພາ 2003.

- ອີງຕາມການຕົກລົງ ຂອງກອງປະຊຸມຄະນະກຳມະການແຫ່ງຊາດ ຕ້ານ ແລະ ຄວບຄຸມພະຍາດຕິດຕໍ່ ຄັ້ງວັນທີ 24 ສິງຫາ 2010.

- ອີງຕາມການສະເໜີຂອງກອງເລຂາ ຂອງຄະນະກຳມະການແຫ່ງຊາດ ຕ້ານ ແລະ ຄວບຄຸມພະຍາດຕິດຕໍ່.

## ນາຍົກລັດຖະມົນຕີ ອອກດຳລັດ :

**<u>ມາດຕາ 1</u>** : ວ່າດ້ວຍ ຄະນະກຳມະການແຫ່ງຊາດ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່.

1.1. ຄະນະກຳມະການແຫ່ງຊາດ ເພື່ອຕ້ານ ແລະ ຄວບຄຸມພະຍາດຕິດຕໍ່ ປະກອບດ້ວຍ : ຄະນະກຳມະການຂັ້ນສູນກາງ ແລະ ຄະນະກຳມະການຂັ້ນແຂວງ, ຄະນະທັງສອງຂັ້ນ ມີອະນຸກຳມະການ ແລະ ມີກອງເລຂາ ເປັນໜ່ວຍງານເສນາທິການຊ່ວຍວຽກຂອງຕົນ.

1.2. ຄະນະກຳມະການແຫ່ງຊາດ ແຕ່ງຕັ້ງໂດຍຂໍ້ຕົກລົງຂອງນາຍົກລັດຖະມົນຕີ.

1.3. ຄະນະກຳມະການຂັ້ນແຂວງ ແຕ່ງຕັ້ງໂດຍຂໍ້ຕົກລົງຂອງທ່ານເຈົ້າແຂວງ.

**<u>ມາດຕາ 2</u>** : ວ່າດ້ວຍພະຍາດຕິດຕໍ່.

ພະຍາດຕິດຕໍ່ທີ່ຂຶ້ນກັບຄວາມຮັບຜິດຊອບຊີ້ນຳ ກ່ຽວກັບການປ້ອງກັນ ແລະ ຄວບຄຸມການລະບາດຂອງຄະນະກຳມະການແຫ່ງຊາດທັງສອງຂັ້ນ ລວມມີ : 1) ພະຍາດ SARS; 2) ພະຍາດໄຂ້ຫວັດສັດປີກ ສາຍພັນ H5N1; 3) ພະຍາດໄຂ້ຫວັດໃຫຍ່ ສາຍພັນໃໝ່ A/H1N1; 4) ພະຍາດໄຂ້ຍູງລາຍ ຫລື ໄຂ້ເລືອດອອກ; 5) ພະຍາດອະຫິວາ; 6) ພະຍາດຕິດຕໍ່ຮ້າຍແຮງອື່ນໆ ທີ່ອາດຈະເກີດຂຶ້ນໃໝ່.

**<u>ມາດຕາ 3</u>** : ວ່າດ້ວຍສິດ ແລະ ໜ້າທີ່ ຂອງຄະນະກຳມະການແຫ່ງຊາດ.

ຄະນະກຳມະການແຫ່ງຊາດ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ ມີສິດ ແລະ ໜ້າທີ່ດັ່ງນີ້ :

3.1. ຊີ້ນໍາການຄົ້ນຄວ້າ ແລະ ຮັບຮອງເອົາແຜນຍຸດທະສາດ ວ່າດ້ວຍການປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ ລວມທັງການຈັດຕັ້ງປະຕິບັດ ແລະ ການດໍາເນີນມາດຕະການທຸກຢ່າງທີ່ຈໍາເປັນ ເພື່ອຕອບໂຕ້ ແລະ ຄວບຄຸມການລະບາດຂອງພະຍາດຕິດຕໍ່ ໃຫ້ໄດ້ຢ່າງວ່ອງໄວທັນການ; ຈໍາກັດຜົນກະທົບ ແລະ ຜົນເສຍຫາຍຕໍ່ສຸຂະພາບ ກໍຄືຊີວິດ ແລະ ຊັບສິນຂອງພົນລະເມືອງ ແລະ ຂອງລັດໃຫ້ມີປະສິດທິພາບ.

3.2. ຕົກລົງປະກາດ ກ່ຽວກັບການລະບາດ ແລະ ການດໍາເນີນບາງມາດຕະການອັນຈໍາເປັນ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ ໃນກໍລະນີມີການລະບາດ.

3.3. ຊີ້ນໍາບັນດາກະຊວງ ອົງການ ແລະ ທ້ອງຖິ່ນ ໃນຂອບເຂດທົ່ວປະເທດ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດ ແລະ ມາດຕະການຕ່າງໆ ເພື່ອປ້ອງກັນການລະບາດຂອງພະຍາດຕິດຕໍ່.

3.4. ຊີ້ນໍາບັນຊາ ແລະ ອໍານວຍຄວບຄຸມຢ່າງເປັນລະບົບກົມກຽວ, ວ່ອງໄວທັນການ ແລະ ເດັດຂາດເຂັ້ມງວດ ໃນການດໍາເນີນມາດຕະການຕ່າງໆທີ່ຈໍາເປັນ ເພື່ອຕອບໂຕ້ ແລະ ດັບມອດການລະບາດຂອງພະຍາດຕິດຕໍ່ ທີ່ເກີດຂຶ້ນໃນຂອບເຂດທົ່ວປະເທດ.

3.5. ຮ່ວມມື ແລະ ປະສານງານກັບບັນດາປະເທດ ແລະ ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງບໍ່ແມ່ນລັດຖະບານ ທີ່ເປັນຄູ່ຮ່ວມມື ເພື່ອຍາດແຍ່ງເອົາການຮ່ວມມືຊ່ວຍເຫລືອ ໃນການຈັດຕັ້ງປະຕິບັດຍຸດທະສາດ ແລະ ມາດຕະການຕ່າງໆ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່; ລວມທັງການຮ່ວມມື ເພື່ອປ້ອງກັນການລະບາດຂ້າມຊາຍແດນ ຂອງພະຍາດຕິດຕໍ່.

3.6. ຊີ້ນໍາກອງເລຂາ ໃນການປະຕິບັດພາລະໜ້າທີ່ເປັນເສນາທິການຊ່ວຍວຽກຢ່າງຮອບດ້ານ, ແລະ ຮັບຟັງການລາຍງານສະພາບການຈັດຕັ້ງປະຕິບັດຍຸດທະສາດ ກໍຄືສະພາບການລະບາດ ແລະ ການຕອບໂຕ້ຄວບຄຸມພະຍາດຕິດຕໍ່ເປັນປົກກະຕິ.

3.7. ແຕ່ງຕັ້ງໜ່ວຍງານ, ບຸກຄົນ ຫລື ຕົກລົງໃຫ້ມີການແຕ່ງຕັ້ງໜ່ວຍງານສະເພາະກິດຂຶ້ນຕາມຄວາມຈໍາເປັນ ເພື່ອດໍາເນີນວຽກງານ ແລະ ມາດຕະການຕ່າງໆ ກ່ຽວກັບການປ້ອງກັນ-ຕອບໂຕ້ ແລະ ຄວບຄຸມພະຍາດຕິດຕໍ່ໃຫ້ມີຜົນສັກສິດ.

3.8. ຕົກລົງ ຫລື ອອກຄໍາສັ່ງໃຫ້ມີການຈັດຕັ້ງລະດົມກໍາລັງຄົນ, ນໍາໃຊ້ງົບປະມານ, ພາຫະນະ, ອຸປະກອນ ແລະ ເຄື່ອງມືອັນຈໍາເປັນ, ລວມທັງການປຸກລະດົມການບໍລິຈາກ ເພື່ອໃຫ້ເກີດກໍາລັງແຮງໃນການປ້ອງກັນ, ຕອບໂຕ້ ແລະ ຄວບຄຸມການລະບາດຂອງພະຍາດຕິດຕໍ່ ໃນຂອບເຂດທົ່ວປະເທດ.

3.9. ຕົກລົງກ່ຽວກັບການຍ້ອງຍໍຊົມເຊີຍ ການຈັດຕັ້ງ ແລະ ບຸກຄົນ ທັງພາກລັດ ແລະ ພາກເອກະຊົນ, ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ປະກອບສ່ວນດ້ວຍຄວາມເປັນເຈົ້າການສູງ ແລະ ມີຜົນງານພົ້ນເດັ່ນໃນການປ້ອງກັນ, ຄວບຄຸມພະຍາດຕິດຕໍ່.

3.10. ຕົກລົງ ຫລື ຊີ້ນໍາໃຫ້ມີການດໍາເນີນມາດຕະການໃດໜຶ່ງ ຢ່າງເດັດຂາດຕໍ່ຜູ້ທີ່ຂັດຂືນ, ບໍ່ໃຫ້ການຮ່ວມມື ຫລື ຝ່າຝືນລະບຽບການທີ່ວາງອອກ ກ່ຽວກັບການປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ ເປັນຕົ້ນແມ່ນລະບຽບການ ແລະ ມາດຕະການທີ່ຕ້ອງໄດ້ປະຕິບັດຢ່າງເຄັ່ງຄັດ ໃນເວລາເກີດການລະບາດ.

**ມາດຕາ 4 :** ວ່າດ້ວຍຄະນະກຳມະການຂັ້ນແຂວງ.

4.1. ຄະນະກຳມະການຂັ້ນແຂວງ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ ໃນດ້ານໜຶ່ງ ແມ່ນຂຶ້ນກັບການຊີ້ນຳ ຂອງຄະນະກຳມະການແຫ່ງຊາດ, ສ່ວນໃນດ້ານໜຶ່ງອີກ ກໍຂຶ້ນກັບການຊີ້ນຳໂດຍກົງ ຂອງຄະນະພັກ, ອົງການປົກຄອງແຂວງ ເວົ້າລວມ ກໍຄືຂອງເລຂາຄະນະພັກ-ເຈົ້າແຂວງຂອງແຂວງນັ້ນໆ ເວົ້າສະເພາະ.

4.2. ຄະນະກຳມະການຂັ້ນແຂວງ ມີສິດ ແລະ ໜ້າທີ່ຄ້າຍຄືກັນກັບຄະນະກຳມະການຂັ້ນສູນກາງ, ມີອະນຸກຳມະການ ແລະ ກອງເລຂາ ເປັນໜ່ວຍງານ ແລະ ເສນາທິການຊ່ວຍວຽກ ຊຶ່ງແມ່ນເຈົ້າແຂວງເປັນຜູ້ຕົກລົງຮັບຮອງເອົາ ແລະ ແຕ່ງຕັ້ງ.

4.3. ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະກຳມະການຂັ້ນແຂວງ ຈະມີການກຳນົດສະເພາະ ໃນຂໍ້ຕົກລົງແຕ່ງຕັ້ງ.

**ມາດຕາ 5 :** ວ່າດ້ວຍກອງເລຂາຂອງຄະນະກຳມະການແຫ່ງຊາດ.

5.1. ກອງເລຂາ ຂອງຄະນະກຳມະການແຫ່ງຊາດ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ ຖືກແຕ່ງຕັ້ງໂດຍຂໍ້ຕົກລົງສະເພາະ ຂອງທ່ານນາຍົກລັດຖະມົນຕີ, ປະທານຄະນະກຳມະການແຫ່ງຊາດ.

5.2. ກອງເລຂາປະກອບດ້ວຍ ບັນດາພະນັກງານຈາກຂະແໜງການທີ່ກ່ຽວຂ້ອງ ຊຶ່ງມີໜ້າທີ່ ແລະ ຄວາມຮັບຜິດຊອບໃນການດຳເນີນວຽກງານຕ່າງໆ ທີ່ມີສ່ວນພົວພັນໂດຍທາງກົງ ແລະ ທາງອ້ອມກັບການປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່.

5.3. ຫົວໜ້າກອງເລຂາ ແມ່ນພະນັກງານທີ່ສັງກັດໃນອົງການ ຫລືຂະແໜງການທີ່ສາມາດເປັນໃຈກາງປະສານງານໄດ້ຢ່າງມີປະສິດທິພາບຄື: ສາມາດຮັບເອົາຄຳສັ່ງ ແລະ ການຊີ້ນຳຂອງຫົວໜ້າຄະນະກຳມະການແຫ່ງຊາດ ໄປຈັດຕັ້ງປະຕິບັດໄດ້ຢ່າງວ່ອງໄວ ທັນການ ແລະ ມີຄວາມສັກສິດ; ທັງຕ້ອງເປັນຜູ້ທີ່ມີເງື່ອນໄຂ ເຮັດໜ້າທີ່ປະສານງານໄດ້ດີ.

5.4. ສິດ ແລະ ໜ້າທີ່ຂອງກອງເລຂາ ໄດ້ກຳນົດໄວ້ໃນຂໍ້ຕົກລົງແຕ່ງຕັ້ງສະເພາະ ໂດຍປະທານຄະນະກຳມະການແຫ່ງຊາດ.

**ມາດຕາ 6 :** ວ່າດ້ວຍອະນຸກຳມະການ ຂອງຄະນະກຳມະການແຫ່ງຊາດ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່.

6.1. ອະນຸກຳມະການຂອງຄະນະກຳມະການແຫ່ງຊາດ ເປັນໜ່ວຍງານຊ່ວຍວຽກວິຊາການສະເພາະດ້ານ, ຊຶ່ງປະກອບດ້ວຍບຸກຄະລາກອນຜູ້ຊ່ຽວຊານ ທີ່ມີຄວາມຮູ້ ມີບົດຮຽນໃນລະດັບອັນແນ່ນອນ ແລະ ມີພະນັກງານຊ່ວຍວຽກຈຳນວນໜຶ່ງ.

6.2. ບັນດາອະນຸກຳມະການ ຂອງຄະນະກຳມະການແຫ່ງຊາດ ປະກອບມີ :

- ອະນຸກຳມະການໂຄສະນາສຸຂະສຶກສາ.
- ອະນຸກຳມະການປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ໃນສັດ.
- ອະນຸກຳມະການປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ໃນຄົນ.

6.3. ແຕ່ລະອະນຸກຳມະການ ປະກອບດ້ວຍບັນດາພະນັກງານຈາກຂະແໜງການທີ່ກ່ຽວຂ້ອງ ຊຶ່ງມີໜ້າທີ່ ແລະ ຄວາມຮັບຜິດຊອບໃນການດຳເນີນວຽກງານຕ່າງໆ ທີ່ມີສ່ວນພົວພັນໂດຍທາງກົງ ແລະ ທາງອ້ອມກັບການປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່.

6.4. ສິດ ແລະ ໜ້າທີ່ຂອງແຕ່ລະອະນຸກຳມະການ ໄດ້ກຳນົດໄວ້ສະເພາະ ໃນຂໍ້ຕົກລົງແຕ່ງຕັ້ງຂອງປະທານຄະນະກຳມະການແຫ່ງຊາດ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່.

6.5. ບັນດາອະນຸກຳມະການ ຖືກແຕ່ງຕັ້ງໂດຍຂໍ້ຕົກລົງຂອງນາຍົກລັດຖະມົນຕີ ປະທານຄະນະກຳມະການແຫ່ງຊາດ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່.

**ມາດຕາ 7 :** ວ່າດ້ວຍຫ້ອງການປະສານງານ ຂອງຄະນະກຳມະການແຫ່ງຊາດ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່.

7.1. ຫ້ອງການປະສານງານ ແມ່ນໜ່ວຍງານວິຊາການຊ່ວຍວຽກໃຫ້ແກ່ກອງເລຂາ ກໍຄືຄະນະກຳມະການແຫ່ງຊາດ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່; ມີໜ້າທີ່ປະສານງານກັບອະນຸກຳມະການຕ່າງໆ, ກັບຄະນະກຳມະການຂັ້ນແຂວງ, ກັບໜ່ວຍງານອື່ນໆທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມມືຕ່າງປະເທດ ເພື່ອຈັດຕັ້ງປະຕິບັດຍຸດທະສາດ ກໍຄືຄຳສັ່ງ ແລະ ມາດຕະການຕ່າງໆ ກ່ຽວກັບການປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ໃນຂອບເຂດທົ່ວປະເທດ.

7.2. ຫ້ອງການປະສານງານ ເປັນໜ່ວຍງານຖາວອນ ທີ່ຂຶ້ນກັບກະຊວງສາທາລະນະສຸກ ໂດຍມີຫົວໜ້າກົມ ຫລືຮອງຫົວໜ້າກົມອະນາໄມ ເປັນຫົວໜ້າຫ້ອງການ, ພ້ອມກັນນັ້ນ ກໍມີພະນັກງານຈາກກະຊວງ-ຂະແໜງການອື່ນທີ່ກ່ຽວຂ້ອງ (ທີ່ບໍ່ປະຈຳການ) ຊຶ່ງຖືກແຕ່ງຕັ້ງໂດຍຫົວໜ້າກອງເລຂາຂອງຄະນະກຳມະການແຫ່ງຊາດ ຮ່ວມເຮັດວຽກຕາມຄວາມຮຽກຮ້ອງຕ້ອງການຕົວຈິງ; ພ້ອມນັ້ນ ກໍໃຫ້ມີພະນັກງານສັນຍາຈ້າງຕາມຄວາມຈຳເປັນ ໂດຍແມ່ນຫົວໜ້າກອງເລຂາ ເປັນຜູ້ຕົກລົງ.

**ມາດຕາ 8 :** ບັນດາກະຊວງ-ອົງການພັກ-ລັດຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນ ແລະ ບັນດາໜ່ວຍງານທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືຈັດຕັ້ງປະຕິບັດດຳລັດສະບັບນີ້ ຕາມພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 9 :** ມອບໃຫ້ກອງເລຂາ ຄະນະກຳມະການແຫ່ງຊາດ ເພື່ອປ້ອງກັນ ແລະ ຄວບຄຸມພະຍາດຕິດຕໍ່ເປັນຜູ້ຈັດຕັ້ງຜັນຂະຫຍາຍ ແລະ ຕິດຕາມ, ຊຸກຍູ້, ກວດກາ ການຈັດຕັ້ງປະຕິບັດ ພ້ອມທັງລາຍງານໃຫ້ຄະນະກຳມະການແຫ່ງຊາດຊາບເປັນແຕ່ລະໄລຍະ.

**ມາດຕາ 10 :** ດຳລັດສະບັບນີ້ ປ່ຽນແທນດຳລັດສະບັບເລກທີ 377/ນຍ, ລົງວັນທີ 9 ທັນວາ 2005 ແລະ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ**

ບົວສອນ ບຸບຜາວັນ